# ຄວາມຮູ້ກ່ຽວກັບສື່ດິຈິຕອນເພື່ອ ອະນາຄົດສີຂຽວ

ຫຼັກສູດ ການຮຽນຮູ້ດ້ວຍໂຕເອງ







# ຍິນດີຕ້ອນຮັບ ສູ່ບົດຮຽນຂອງເຮົາ

ທ່ານມີຄວາມສົນໃຈໃນສື່ມວນຊົນ, ສັງຄົມ, ການປ່ຽນແປງສະພາບອາກາດ, ແລະ ສ້າງຄວາມແຕກຕ່າງບໍ? ຫຼັກສູດນີ້ແມ່ນເປັນສ່ວນໜຶ່ງຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ (GAMCIL), ເຊິ່ງຈະຊ່ວຍໃຫ້ປະເທດລາວສາມາດຮັບມືກັບການປ່ຽນແປງຂອງດິນຟ້າອາກາດ ແລະ ປົກປັກຮັກສາສິ່ງແວດລ້ອມ.

# ຍ້ອນຫຍັງຈຶ່ງຕ້ອງແມ່ນຫຼັກສູດນີ້?

ສື່ດັ້ງເດີມ (ໜັງສືພິມ, ວິທະຍຸ ແລະ ໂທລະພາບ...) ແລະ ສື່ອອນລາຍ ເປັນເຄື່ອງມືທີ່ມີປະສິດທິພາບໃນການສົ່ງເສີມການພັດທະນາແບບຍືນຍົງ, ຜູ້ມີອິດທິພົນທາງສື່ສັງຄົມອອນລາຍ, bໄລ້ວນແລ້ວແຕ່ມີບົດບາດສຳຄັນໃນການສ້າງຄວາມຮູ້, ຄວາມເຂົ້າໃຈກ່ຽວກັບບັນຫາສິ່ງແວດລ້ອມ, ເມື່ອຄົນເຮົາເຂົ້າໃຈບັນຫາເຫຼົ່ານີ້ດີຂຶ້ນ ພວກເຂົາກໍ່ຈະສາມາດເລືອກເຮັດໃນສິ່ງທີ່ສະຫຼາດໃຫ້ແກ່ຕົນເອງ ແລະ ຊຸມຊົນຂອງພວກເຂົາໄດ້.





# ສື່ໃນປະຈຸບັນ





ທຸກມື້ນີ້ ຄົນຈຳນວນຫຼາຍຮັບຮູ້ຂໍ້ມູນຂ່າວສານຜ່ານສື່ສັງຄົມອອນລາຍ, ດັ່ງນັ້ນຈຶ່ງຈຳເປັນສຳລັບຜູ້ສ້າງເນື້ອໃນຕ່າງໆຄືກັບບັນດາທ່ານ ທີ່ຈະຕ້ອງເຂົ້າໃຈພື້ນຖານຂອງການປ່ຽນແປງດິນຟ້າອາກາດ ແລະ ບັນຫາສິ່ງແວດລ້ອມ, ເພື່ອໃຫ້ພວກເຮົາທຸກຄົນສາມາດສື່ສານກັບປະຊາຊົນ, ຊຸມຊົນຂອງເຮົາ ແລະ ໃຫ້ຂໍ້ມູນທີ່ຖືກຕ້ອງໄດ້. ຫຼັກສູດນີ້ຈະຊ່ວຍໃຫ້ທ່ານສາມາດແບ່ງປັນຂໍ້ມູນທີ່ສຳຄັນເຫຼົ່ານີ້ກັບບັນດາຜູ້ຊົມຜູ້ຟັງຂອງທ່ານ ໃນແບບທີ່ຖືກຕ້ອງ ແລະ ມີສ່ວນຮ່ວມ.

**ນີ້ແມ່ນສິ່ງທີ່ທ່ານຈະໄດ້ຮຽນຮູ້......**

# ອົງປະກອບພາຍໃນຫຼັກສູດ

ຫຼັກສູດນີ້ໄດ້ແບ່ງອອກເປັນ 5 ໂມດູນ ໂດຍແຕ່ລະສ່ວນຈະມີຂໍ້ມູນ ແລະ ແບບສອບຖາມ, ບັນດາທ່ານຈະເປັນຄົນຕັດສິນໃຈວ່າ ຈະຮຽນຮູ້ແຕ່ລະພາກສ່ວນແບບໃດ.


ບັນຫາດິນຟ້າອາກາດ

ພາບລວມຂອງການປ່ຽນແປງດິນຟ້າອາກາດ ແລະ ສິ່ງທ້າທາຍດ້ານສິ່ງແວດລ້ອມ


ຄວາມຮູ້ດ້ານດິຈິຕອລ

ຄວາມເຂົ້າໃຈໃນເຕັກໂນໂລຊີ ດິຈິຕອນຢ່າງປອດໄພ ແລະ ມີຄວາມຮັບຜິດຊອບ


ການສົ່ງເສີມເພື່ອສີຂຽວ

ສື່ສັງຄົມອອນລາຍເພື່ອຍົກສູງຄວາມຮັບຮູ້ດ້ານສິ່ງແວດລ້ອມ


ການເລົ່າເລື່ອງ

ເຕັກນິກການເລົ່າເລື່ອງທີ່ໜ້າສົນໃຈ



ຈັນຍາບັນສື່ມວນຊົນ

ລະບຽບ ແລະ ມາດຖານຂອງນັກຂ່າວສື່ມວນຊົນຢ່າງມີຄວາມຮັບຜິດຊອບ

# ພົບກັບຜູ້ຂຽນຫຼັກສູດຂອງພວກເຮົາ



**KYLE JAMES**

TECHNICAL CONSULTANT FOR CAPACITY DEVELOPMENT

ຄາຍ ເຈມ ມີປະສົບການຫຼາຍກວ່າ 15 ປີ ໃນວຽກງານພັດທະນາການສື່ສານ ແລະ ກ່ອນໜ້ານັ້ນລາວຍັງເຄີຍເປັນນັກຂ່າວທີ່ມີປະສົບການຫຼາຍກວ່າ 14 ປີ, ເຄີຍຝຶກອົບຮົມນັກຂ່າວ ແລະ ຜູ້ຊ່ຽວຊານດ້ານການສື່ສານ ໃນນະຄອນຫຼວງວຽງຈັນ ແລະ ຫຼວງພະບາງ ລວມທັງເທິງສື່ອອນລາຍ.



# ມາເລີ່ມກັນເລີຍ!

## ກະລຸນາໄປທີ່ໂມດູນ 1

**ບົດແນະນຳກ່ຽວກັບບັນຫາດິນຟ້າອາກາດ ແລະ ສິ່ງແວດລ້ອມ**